ມີແຜ່ນ CD ຄັດມາພ້ອມ

# ຄູ່ມື
# ການຂໍໃບຢັ້ງຢືນ
# ແຫຼ່ງກຳເນີດສິນຄ້າ
# Form A



ກົມການນຳເຂົ້າ ແລະ ສົ່ງອອກ
ກະຊວງອຸດສາຫະກຳ ແລະ ການຄ້າ



# ຄູ່ມື

# ການຂໍໃບຢັ້ງຢືນ ແຫຼ່ງກຳເນີດສິນຄ້າ

# Form A

**ກະກຽມ ແລະ ຮຽບຮຽງໂດຍ**

**ຄະນະຊີ້ນຳລວມ**

| | |
|---|---|
| ທ່ານ ນາງ ບານສະຕີ ເທບພະວົງ | ຫົວໜ້າກົມການນຳເຂົ້າ ແລະ ສົ່ງອອກ |
| ທ່ານ ເຂັມເດັດ ສີຫາວົງ | ຮອງຫົວໜ້າກົມການນຳເຂົ້າ ແລະ ສົ່ງອອກ |
| ທ່ານ ໄຊທິເດດ ອິນທະສອນ | ຮອງຫົວໜ້າກົມການນຳເຂົ້າ ແລະ ສົ່ງອອກ |
| ທ່ານ ນາງ ມະນີວອນ ວົງໄຊ | ຮອງຫົວໜ້າກົມການນຳເຂົ້າ ແລະ ສົ່ງອອກ |

**ຄະນະກວດແກ້ເນື້ອໃນ ແລະ ຮຽບຮຽງ**

| | |
|---|---|
| ທ່ານ ວັນໄຊ ແກ້ວຄຳພັນ | ຫົວໜ້າພະແນກຄຸ້ມຄອງແຫຼ່ງກຳເນີດສິນຄ້າ |
| ທ່ານ ພຸດສະຫວັນ ຂຸນຈັນທະ | ຫົວໜ້າພະແນກຄົ້ນຄວ້າ ແລະ ສັງລວມ |
| ທ່ານ ໄຊຍະສອນ ສີລີພົງ | ຮອງຫົວໜ້າພະແນກຄຸ້ມຄອງແຫຼ່ງກຳເນີດສິນຄ້າ |
| ທ່ານ ສອນມາລາ ນວນທະສີງ | ຮອງຫົວໜ້າພະແນກອຳນວຍຄວາມສະດວກທາງດ້ານການຄ້າ |
| ທ່ານ ອານຸຊາ ແສນສົມບັດ | ວິຊາການ ພະແນກຄຸ້ມຄອງແຫຼ່ງກຳເນີດສິນຄ້າ |

**ຄະນະອອກແບບ, ຈັດລຽງ**

| | |
|---|---|
| ທ່ານ ຄຳໃບ ສິດທິລາດວົງສາ | ຮອງຫົວໜ້າພະແນກອຳນວຍຄວາມສະດວກທາງດ້ານການຄ້າ |
| ທ່ານ ສຸພາວົງ ວໍລະບຸດ | ວິຊາການ ພະແນກອຳນວຍຄວາມສະດວກທາງດ້ານການຄ້າ |

**ຄະນະທີມງານຂຽນ**

| | |
|---|---|
| ພະແນກຄຸ້ມຄອງແຫຼ່ງກຳເນີດສິນຄ້າ | ກົມການນຳເຂົ້າ ແລະ ສົ່ງອອກ |

# ຄຳເຫັນຂອງ ທ່ານ ຫົວໜ້າກົມການນຳເຂົ້າ ແລະ ສົ່ງອອກ

ເພື່ອປະກອບສ່ວນໃນການຜັນຂະຫຍາຍແຜນພັດທະນາອຸດສາຫະກຳປຸງແຕ່ງ ແລະ ການຄ້າ 5 ປີ (2016-2020), ໂດຍສະເພາະແມ່ນການບັນລຸຄາດໝາຍສູ້ຊົນເພື່ອການສົ່ງອອກສິນຄ້າອຸດສາຫະກຳປຸງແຕ່ງຂະຫຍາຍຕົວສະເລ່ຍ 15% ຕໍ່ປີ, ກົມການນຳເຂົ້າ ແລະ ສົ່ງອອກ ໄດ້ຄົ້ນຄວ້າຮຽບຮຽງສ້າງປື້ມຄູ່ມື ກ່ຽວກັບ ການຂໍໃບຢັ້ງຢືນແຫຼ່ງກຳເນີດສິນຄ້າຟອມເອ “Form A” ຂຶ້ນມາ ເພື່ອໃຫ້ພາກລັດ ໂດຍສະເພາະ ຫ້ອງການເຈົ້າໜ້າທີ່ອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ ໄດ້ນຳໃຊ້ເປັນບ່ອນອີງໃນການຈັດຕັ້ງປະຕິບັດໃຫ້ຖືກຕ້ອງ ແລະ ສອດຄ່ອງຕາມຫລັກການຂອງການກຳນົດລະບຽບແຫຼ່ງກຳເນີດສິນຄ້າຕາມແຕ່ລະກອບສັນຍາໄດ້ວາງໄວ້, ແນ່ໃສ່ສ້າງປະໂຫຍດສູງສຸດໃນການປະຕິບັດໜ້າທີ່ວຽກງານຂອງພາກລັດ. ພ້ອມດຽວກັນນີ້, ແນ່ໃສ່ອຳນວຍຄວາມສະດວກໃຫ້ພາກທຸລະກິດ, ໂດຍສະເພາະແມ່ນບັນດາບໍລິສັດຜູ້ຜະລິດເພື່ອການສົ່ງອອກພາຍໃຕ້ລະບົບສິດທິພິເສດທາງການຄ້າ, ໄດ້ສຶກສາ, ສ້າງຄວາມເຂົ້າໃຈ ແລະ ນຳໃຊ້ໃຫ້ມີປະສິດທິພາບ.

ປື້ມຄູ່ມືເຫຼັ້ມນີ້ ໄດ້ສັງລວມເອົາບັນດາລະບຽບການພື້ນຖານ ກ່ຽວກັບ ລະບຽບແຫຼ່ງກຳເນີດສິນຄ້າຂອງສະຫະພາບເອີລົບ, ຍີ່ປຸ່ນ, ສະວິດເຊີແລນ, ນໍເວ ແລະ ອື່ນໆ…ຊຶ່ງແມ່ນຕະຫຼາດເປົ້າໝາຍສຳຄັນສຳລັບສິນຄ້າສົ່ງອອກຂອງ ສປປ ລາວ.

ນອກນັ້ນ, ພວກເຮົາຍັງໄດ້ອະທິບາຍລະອຽດ ກ່ຽວກັບ ການຕື່ມແບບຟອມ, ເອກະສານປະກອບ, ຂັ້ນຕອນພິຈາລະນາ ເພື່ອໃຫ້ຜູ້ປະກອບການດ້ານການສົ່ງອອກ ສາມາດຮັບຮູ້, ເຂົ້າໃຈ ແລະ ນຳໄປປະຕິບັດໄດ້ຢ່າງຖືກຕ້ອງ.

ພວກເຮົາ, ກົມການນຳເຂົ້າ ແລະ ສົ່ງອອກ ໄດ້ພ້ອມພຽງກັນສ້າງປື້ມຄູ່ມືເຫຼັ້ມນີ້ຂຶ້ນມາດ້ວຍຄວາມເອົາໃຈໃສ່ສູງ ແລະ ດ້ວຍຄວາມມຸ່ງຫວັງ ເພື່ອຜູ້ນຳໃຊ້ໄດ້ຮັບຜົນປະໂຫຍດສູງສຸດ. ຖ້າມີຂໍ້ຂາດຕົກບົກພ່ອງປະການໃດ ພວກເຮົາຂໍອະໄພ ແລະ ຍິນດີຮັບເອົາຄຳຕຳນິຕິຊົມຂອງພວກທ່ານ ເພື່ອນຳໄປປັບປຸງໃນຄັ້ງຕໍ່ໄປໃຫ້ດີຂຶ້ນເລື້ອຍໆ.

ພວກເຮົາຫວັງຢ່າງຍິ່ງວ່າ ປື້ມຄູ່ມືເຫຼັ້ມນີ້ ຈະເປັນປະໂຫຍດຢ່າງສູງສຸດ ໃຫ້ກັບນັກທຸລະກິດຜູ້ປະກອບການດ້ານການສົ່ງອອກ, ນັກຮຽນ-ນັກສຶກສາ ແລະ ພະນັກງານພາກລັດຜູ້ທີ່ມີຄວາມສົນໃຈ ແລະ ຜູ້ທີ່ເຮັດວຽກຕິດພັນກັບການຢັ້ງຢືນແຫຼ່ງກຳເນີດສິນຄ້າ.

ນະຄອນຫຼວງວຽງຈັນ, ວັນທີ 30 ມິຖຸນາ 2015

ຫົວໜ້າກົມການນຳເຂົ້າ ແລະ ສົ່ງອອກ,

ນ.ບານເສມຕີ ເທບພະວົງ

# ຄຳສັບຫຍໍ້

| | | |
|---|---|---|
| CTH | : | Change in Tariff Heading ການປ່ຽນລະຫັດພາສີເຄົ້າ |
| CPE | : | Confirmation of Product Ebigibility ໃບຮັບຮອງສິນຄ້າໄດ້ແຫຼ່ງກຳເນີດ |
| EBA | : | Everything But Arms ທຸກລາຍການສິນຄ້າ ຍົກເວັ້ນອາວຸດສົງຄາມ |
| EU | : | European Union ສະຫະພາບເອີລົບ |
| FOB | : | Free On Board ລາຄາສິນຄ້າສົ່ງຮອດທ່າເຮືອ |
| FTA | : | Free Trade Agreement ສັນຍາການຄ້າເສລີ |
| GSP | : | Generalized System of Preferences ລະບົບສິດທິພິເສດທາງການຄ້າ |
| MFN | : | Most Favoured Nation ປະເທດທີ່ໄດ້ຮັບອານຸເຄາະຫລາຍ |
| PSR | : | Product Specific Rules ລະບຽບແຫຼ່ງກຳເນີດສິນຄ້າແບບສະເພາະຜະລິດຕະພັນ |
| ROO | : | Rule of Origin ລະບຽບແຫຼ່ງກຳເນີດສິນຄ້າ |
| RVC | : | Regional Value Content ກົດການສ້າງມູນຄ່າເພີ່ມພາຍໃນກຸ່ມ |
| SAARC | : | South Asian Association for Regional Cooperation ປະຊາຄົມການຮ່ວມມືລະດັບພາກພື້ນອາຊີໃຕ້ |
| WO | : | Wholly Obtained or Produced ສິນຄ້າທີ່ໄດ້ມາ ຫລື ຜະລິດຂຶ້ນໂດຍການນຳໃຊ້ວັດຖຸດິບພາຍໃນທັງໝົດ |

# ສາລະບານ

I. ລະບົບສິດທິພິເສດທາງການຄ້າ (GENERALIZED SYSTEM OF PREFERENCES : GSP ) ........ 1
1. ຄວາມໝາຍ ແລະ ຄວາມສຳຄັນຂອງ GSP ........ 1
2. ປະໂຫຍດຂອງ GSP ........ 1
3. ເງື່ອນໄຂເພື່ອໃຫ້ໄດ້ຮັບ GSP ........ 1
4. ບັນດາປະເທດທີ່ໃຫ້ GSP ແກ່ ສປປ ລາວ ........ 2
II. ລະບຽບແຫຼ່ງກຳເນີດສິນຄ້າຂອງແຕ່ລະປະເທດ: ROO ........ 3
2.1 ລະບຽບແຫຼ່ງກຳເນີດສິນຄ້າ ຂອງ EU ........ 3
2.2 ລະບຽບແຫຼ່ງກຳເນີດສິນຄ້າຂອງ ຍີ່ປຸ່ນ ........ 4
2.3 ລະບຽບແຫຼ່ງກຳເນີດສິນຄ້າຂອງ ນິວຊີແລນ ........ 4
2.4 ລະບຽບແຫຼ່ງກຳເນີດສິນຄ້າຂອງ ນໍເວ ........ 4
2.5 ລະບຽບແຫຼ່ງກຳເນີດສິນຄ້າຂອງ ລັດເຊຍ, ກາຊັກສະຖານ ແລະ ເບລາລຸດ ........ 5
2.6 ລະບຽບແຫຼ່ງກຳເນີດສິນຄ້າຂອງ ສະວິດເຊີແລນ ........ 5
2.7 ລະບຽບແຫຼ່ງກຳເນີດສິນຄ້າຂອງ ຕວກກີ ........ 5
2.8 ລະບຽບແຫຼ່ງກຳເນີດສິນຄ້າຂອງ ອົດສະຕາລີ ........ 6
2.9 ລະບຽບແຫຼ່ງກຳເນີດສິນຄ້າຂອງ ການາດາ ........ 6
III. ລະບຽບການອອກຟອມ A ........ 7
3.1 ຂັ້ນຕອນການຂໍໃບຮັບຮອງສິນຄ້າໄດ້ແຫຼ່ງກຳເນີດ (CPE) ........ 7
3.2 ຂັ້ນຕອນ ແລະ ການປະກອບເອກະສານຂໍອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ ຟອມ A ........ 9
3.3 ຄ່າທຳນຽມ ໃນການອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ FORM A ........ 9
IV. ແນະນຳການຕື່ມຂໍ້ມູນໃສ່ ຟອມ A ........ 11
V. ຄຳອະທິບາຍດ້ານຫຼັງ FORM A ........ 12
VI. ສິ່ງທີ່ຄວນເອົາໃຈໃສ່ ........ 16
VII. ຫ້ອງການເຈົ້າໜ້າທີ່ຢັ້ງຢືນແຫຼ່ງກຳເນີດສິນຄ້າ ........ 17

## I. ລະບົບສິດທິພິເສດທາງການຄ້າ (Generalized system of Preferences : GSP )

ພາຍຫຼັງສົງຄາມໂລກຄັ້ງທີ II ສິ້ນສຸດ ພາວະເສດຖະກິດໂລກໄດ້ຕົກຕໍ່າລົງ, ປະເທດກໍາລັງພັດທະນາ ແລະ ດ້ອຍພັດທະນາ ເສຍປຽບດ້ານການແຂ່ງຂັນທາງການຄ້າ. ດັ່ງນັ້ນ, ຈຶ່ງເກີດແນວຄວາມຄິດກ່ຽວກັບລະບົບສິດທິພິເສດທາງການຄ້າ (GSP) ຂຶ້ນເພື່ອຊ່ວຍຊຸກຍູ້ສົ່ງເສີມປະເທດທີ່ກໍາລັງພັດທະນາ ແລະ ດ້ອຍພັດທະນາ ເພີ່ມຄວາມສາມາດຂອງການແຂ່ງຂັນທາງການຄ້າ.

## 1. ຄວາມໝາຍ ແລະ ຄວາມສໍາຄັນຂອງ GSP

Generalized System of Preferences: GSP ແມ່ນລະບົບສິດທິພິເສດທາງການຄ້າຂອງປະເທດ ທີ່ພັດທະນາແລ້ວໃຫ້ກັບປະເທດທີ່ກໍາລັງພັດທະນາ ແລະ ປະເທດດ້ອຍພັດທະນາ, ພາຍໃຕ້ລະບົບສິດທິພິເສດດັ່ງກ່າວ ສິນຄ້າຂາອອກຂອງປະເທດກໍາລັງພັດທະນາ ແລະ ປະເທດດ້ອຍພັດທະນາ ເມື່ອນໍາເຂົ້າປະເທດທີ່ພັດທະນາແລ້ວຈະໄດ້ຮັບການຍົກເວັ້ນພາສີນໍາເຂົ້າ ຫລື ເສຍພາສີໃນອັດຕາທີ່ຕໍ່າທີ່ສຸດ.

## 2. ປະໂຫຍດຂອງ GSP

- ສົ່ງເສີມການສົ່ງອອກ ແລະ ເປີດໂອກາດໃຫ້ສິນຄ້າຂອງປະເທດດ້ອຍພັດທະນາ ເຂົ້າສູ່ຕະຫຼາດຂອງປະເທດ ທີ່ພັດທະນາແລ້ວ ໂດຍອາໄສສິດທິພິເສດທາງການຄ້າ.
- ສົ່ງເສີມການລົງທຶນ, ການຜະລິດ ແລະ ການຈ້າງງານ ໃນປະເທດດ້ອຍພັດທະນາ.
- ສົ່ງເສີມໃຫ້ນໍາໃຊ້ວັດຖຸດິບພາຍໃນປະເທດ ແລະ ວັດຖຸດິບນໍາເຂົ້າຈາກປະເທດສະມາຊິກຂອງກຸ່ມດຽວກັນ ໂດຍປະຕິບັດຕາມເງື່ອນໄຂວ່າດ້ວຍແຫຼ່ງກໍາເນີດສິນຄ້າ.

## 3. ເງື່ອນໄຂເພື່ອໃຫ້ໄດ້ຮັບ GSP

ສິນຄ້າທີ່ຈະໄດ້ຮັບສິດທິພິເສດ GSP ຈະຕ້ອງມີເງື່ອນໄຂ ຄື:

ກ. ສິນຄ້າຕ້ອງນອນໃນບັນຊີທີ່ໄດ້ຮັບສິດທິພິເສດ ກໍານົດໂດຍປະເທດທີ່ໃຫ້ GSP;

ຂ. ສິນຄ້າຕ້ອງຜະລິດຕາມເງື່ອນໄຂລະບຽບແຫຼ່ງກໍາເນີດສິນຄ້າ (ROO) ຂອງປະເທດໃຫ້ GSP ກໍານົດ ແລະ ຕ້ອງມີໃບຢັ້ງຢືນແຫຼ່ງກໍາເນີດສິນຄ້າ (Form A);

ຄ. ສິນຄ້າຕ້ອງຖືກຈັດສົ່ງໂດຍກົງ (Direct Consignment)

---

[1] ໃນກໍລະນີ ປະເທດ ທີ່ບໍ່ມີຊາຍແດນຕິດກັບທະເລ ແລະ ຕ້ອງຂົນສົ່ງຜ່ານປະເທດທີ່ສາມ, ສິນຄ້າດັ່ງກ່າວ ຕ້ອງບໍ່ຜ່ານຂະບວນການຜະລິດ ຫຼື ຂະບວນການອື່ນໆ ນອກຈາກການຄ່ຽນຖ່າຍ ແລະ ຕ້ອງຢູ່ພາຍໃຕ້ການຄຸ້ມຄອງໂດຍກົງຈາກເຈົ້າໜ້າທີ່ພາສີຂອງປະເທດທີ່ສົ່ງຜ່ານ.

## 4. ບັນດາປະເທດທີ່ໃຫ້ GSP ແກ່ ສປປ ລາວ.

ປະເທດທີ່ໃຫ້ GSP ສ່ວນໃຫຍ່ ແມ່ນປະເທດທີ່ພັດທະນາແລ້ວ ແລະ ປະເທດທີ່ກຳລັງພັດທະນາຈຳນວນໜຶ່ງ ຄື: ສປ ຈີນ, ໄທ, ອິນເດຍ ແລະ ອື່ນໆ...

ສປປ ລາວ ໄດ້ຮັບສິດທິພິເສດທາງການຄ້າຈາກ 38 ປະເທດ ຄື: ສະຫະພາບເອີຣົບ (28 ປະເທດ), ອົດສະຕາລີ, ເບລາຣຸສ, ການາດາ, ຍີ່ປຸ່ນ, ກາຊັກສະຖານ, ນີວຊີແລນ, ນໍເວ, ຣັດເຊຍ, ສະວິດເຊີແລນ ແລະ ຕຶກກີ, ໂດຍນຳໃຊ້ ຟອມເອ (Form A).

ສັງລວມບັນດາປະເທດທີ່ໃຫ້ GSP ແກ່ ສປປ ລາວ

| ປະເທດ | ລາຍການສິນຄ້າ | ອັດຕາພາສີ % |
|---|---|---|
| ສະຫະພາບເອີລົບ | ທຸກລາຍການສິນຄ້າ (ຍົກເວັ້ນອາວຸດສົງຄາມ) | 0 |
| ຍີ່ປຸ່ນ | ທຸກລາຍການສິນຄ້າ (ຍົກເວັ້ນອາວຸດສົງຄາມ) | 0 |
| ລັດເຊຍ, ກາຊັກສະຖານ ແລະ ເບລາລຸດ | 2,800 ລາຍການ | 0 |
| ນີວຊີແລນ | 72% ຂອງລາຍການສິນຄ້າທັງໝົດໃນສາລະບານອັດຕາພາສີ (HS) ຂອງປະເທດ ນີວຊີແລນ | 0 |
| ນໍເວ | ທຸກລາຍການສິນຄ້າ (ຍົກເວັ້ນອາວຸດສົງຄາມ) | 0 |
| ສະວິດເຊີແລນ | ທຸກລາຍການສິນຄ້າ (ຍົກເວັ້ນອາວຸດສົງຄາມ) | 0 |
| ຕຶກກີ | ທຸກລາຍການສິນຄ້າທີ່ນອນໃນໝວດ 25-97 | ຫຼຸດຜ່ອນອັດຕາພາສີ |
| ອົດສະຕາລີ | ທຸກລາຍການສິນຄ້າ (ຍົກເວັ້ນອາວຸດສົງຄາມ) | 0 |
| ການາດາ | ທຸກລາຍການສິນຄ້າ (ຍົກເວັ້ນອາວຸດສົງຄາມ) ໃນນັ້ນມີການຈຳກັດດ້ານປະລິມານຂອງການນຳເຂົ້າສິນຄ້າບາງປະເພດ ເຊັ່ນ: ນົມ, ຊີ້ນໄກ່ ແລະ ໄຂ່. | 0 |

ໝາຍເຫດ: ລາຍລະອຽດ ກ່ຽວກັບ ລາຍການສິນຄ້າຕ່າງໆ ສາມາດເຂົ້າເບິ່ງໄດ້ທີ່ www.laotradeportal.gov.la

## II. ລະບຽບແຫຼ່ງກຳເນີດສິນຄ້າຂອງແຕ່ລະປະເທດ: ROO

ລະບຽບແຫຼ່ງກຳເນີດສິນຄ້າ ແມ່ນການວາງເງື່ອນໄຂ ຫຼື ມາດຖານໃນການກຳນົດສັນຊາດຂອງຜະລິດຕະພັນ ແລະ ແຫຼ່ງທີ່ຜະລິດຕະພັນໄດ້ຮັບການຜະລິດຂຶ້ນ. ການກຳນົດລະບຽບແຫຼ່ງກຳເນີດສິນຄ້າຂອງແຕ່ລະປະເທດທີ່ໃຫ້ GSP ແມ່ນມີຫລັກການທີ່ຄ້າຍຄືກັນ, ຊຶ່ງຈະກຳນົດ II ຫລັກການ ຄື:

1. ສິນຄ້າທີ່ຜະລິດຂຶ້ນໂດຍນຳໃຊ້ວັດຖຸດິບພາຍໃນປະເທດທັງໝົດ (Wholly Obtained or Produced: WO) ແມ່ນຖືວ່າໄດ້ແຫຼ່ງກຳເນີດແບບອັດຕະໂນມັດ ແລະ ຈະໄດ້ຮັບອັດຕາພາສີນຳເຂົ້າ 0% ໂດຍພື້ນຖານແລ້ວແມ່ນສິນຄ້າກະສິກຳ, ເຄື່ອງປ່າຂອງດົງ ແລະ ແຮ່ທາດ ໆລໆ.

2. ສິນຄ້າ ທີ່ຜະລິດຂຶ້ນໂດຍບໍ່ໄດ້ນຳໃຊ້ວັດຖຸດິບພາຍໃນປະເທດທັງໝົດ (ນຳໃຊ້ວັດຖຸດິບນຳເຂົ້າຈາກກຸ່ມປະເທດທີ່ໃຫ້ GSP, ປະເທດກຳລັງພັດທະນາ ແລະ ປະເທດດ້ອຍພັດທະນາ) ແມ່ນມີລະບຽບການທີ່ແຕກຕ່າງກັນ, ຊຶ່ງແຕ່ລະປະເທດມີລະບຽບການ ຄືດັ່ງນີ້:

### 2.1 ລະບຽບແຫຼ່ງກຳເນີດສິນຄ້າ ຂອງ EU

ສຳລັບສິນຄ້າທີ່ນຳໃຊ້ວັດຖຸດິບຈາກຕ່າງປະເທດເພື່ອມາຜະລິດ ຈະຕ້ອງປະຕິບັດຕາມລະບຽບທີ່ກຳນົດ ເຊັ່ນ:

(ກ). ຕ້ອງຜ່ານຂະບວນການຜະລິດໃດໜຶ່ງ ຈົນມີການປ່ຽນລະຫັດພາສີເຄົ້າ ໃນລະດັບ 4 ຕົວເລກ (Change in Tariff Heading: CTH); ຫລື

(ຂ). ວັດຖຸດິບນຳເຂົ້າ ທີ່ບໍ່ມີແຫຼ່ງກຳເນີດ ແມ່ນບໍ່ເກີນ 60% ຂອງມູນຄ່າສິນຄ້າ (Maximum permitted content of non - originating materials)

(ຄ). EU ອະນຸຍາດໃຫ້ປະເທດດ້ອຍພັດທະນາ ສາມາດນຳໃຊ້ວັດຖຸດິບທີ່ມີແຫຼ່ງກຳເນີດຈາກປະເທດສະມາຊິກອາຊຽນ (ຍົກເວັ້ນ ໄທ, ສິງກາໂປ), ຈາກປະເທດສະມາຊິກ EU, ສະວິດເຊີແລນ, ນໍເວ ແລະ ຕຶວກກີ, ຈາກປະເທດທີ່ມີສັນຍາການຄ້າເສລີກັບ EU ແລະ ສະມາຊິກປະຊາຄົມການຮ່ວມມືພາກພື້ນອາຊີໃຕ້ (South Asia Association for Regional Cooperation: SAARC, (ແຕ່ຕ້ອງໄດ້ຂໍອະນຸມັດລ່ວງໜ້າຈາກສະຫະພາບເອີຣົບ) ເພື່ອມາສ້າງມູນຄ່າເພີ່ມພາຍໃນກຸ່ມ (RVC[3]) ≥ 40% ໄດ້.

(ງ). ກໍລະນີທີ່ບໍ່ຕ້ອງຂໍ ຟອມ A

- ສິນຄ້າທີ່ມີມູນຄ່າບໍ່ສູງເຖິງ 500 ຢູໂຣ ແລະ ບໍ່ມີຈຸດປະສົງທາງການຄ້າ ຫລື ສິນຄ້າເພື່ອນຳໄປວາງສະແດງແລ້ວນຳກັບຄືນມາ; ຫລື
- ສິນຄ້າຕິດຕົວຜູ້ໂດຍສານ ມູນຄ່າບໍ່ເກີນ 1,200 ຢູໂຣ.

---

[2] ປະເທດກຳລັງພັດທະນາ ແລະ ປະເທດດ້ອຍພັດທະນາ ຕ້ອງແມ່ນປະເທດທີ່ໄດ້ຮັບສິດທິພິເສດ ຈາກປະເທດທີ່ໃຫ້ GSP ເທົ່ານັ້ນ.

[3] $$\text{RVC}=\frac{\text{ລາຄາສິນຄ້າສົ່ງຮອດທ່າເຮືອ } (FOB)-\text{ ມູນຄ່າວັດຖຸດິບທີ່ບໍ່ມີແຫຼ່ງກຳເນີດ}}{\text{ລາຄາສິນຄ້າສົ່ງຮອດທ່າເຮືອ } (FOB)}x\ 100\%$$

## 2.2 ລະບຽບແຫຼ່ງກຳເນີດສິນຄ້າຂອງ ຍີ່ປຸ່ນ

ສຳລັບສິນຄ້າທີ່ນຳໃຊ້ວັດຖຸດິບຈາກຕ່າງປະເທດເພື່ອມາຜະລິດ ຈະຕ້ອງປະຕິບັດຕາມລະບຽບທີ່ກຳນົດ ເຊັ່ນ:

(ກ). ຕ້ອງປ່ຽນລະຫັດພາສີ (Change in Tariff Heading: CTH) ລະດັບ 4 ຕົວເລກ; ຫລື

(ຂ). ຕ້ອງສ້າງມູນຄ່າເພີ່ມ RVC ≥ 40%; ຫລື

(ຄ). ສິນຄ້າຕ້ອງຜະລິດຕາມແບບສະເພາະຜະລິດຕະພັນ (PSR) ເຊັ່ນ: ເຄື່ອງນຸ່ງຫົ່ມ, ຜະລິດ ຕະພັນເຄມີ ແລະ ອື່ນໆ.

(ງ). ຍີ່ປຸ່ນ ອະນຸຍາດໃຫ້ນຳໃຊ້ວັດຖຸດິບຈາກຍີ່ປຸ່ນ ເພື່ອມາສະສົມແຫຼ່ງກຳເນີດສິນຄ້າໄດ້.

(ຈ). ສິນຄ້າທີ່ມີມູນຄ່າບໍ່ເກີນ 200,000 ເຢັນ ຫຼື ປະມານ 2,000 ໂດລາສະຫະລັດ ແມ່ນບໍ່ຈຳເປັນຕ້ອງຂໍ ຟອມ A.

## 2.3 ລະບຽບແຫຼ່ງກຳເນີດສິນຄ້າຂອງ ນິວຊີແລນ

ສຳລັບສິນຄ້າທີ່ນຳໃຊ້ວັດຖຸດິບຈາກຕ່າງປະເທດເພື່ອມາຜະລິດ ຈະຕ້ອງປະຕິບັດຕາມລະບຽບທີ່ກຳນົດ ເຊັ່ນ:

ກ) ວັດຖຸດິບທີ່ນຳມາຈາກປະເທດນິວຊີແລນ, ປະເທດດ້ອຍພັດທະນາ / ປະເທດກຳລັງພັດທະນາ ເພື່ອມາສະສົມມູນຄ່າເພີ່ມ ແມ່ນບໍ່ເກີນ 50% ຂອງຕົ້ນທຶນການຜະລິດ;

ຂ) ຜະລິດຕະພັນດັ່ງກ່າວຕ້ອງໄດ້ຮັບການປຸງແຕ່ງ ຫຼື ແປຮູບສ່ວນໃດສ່ວນໜຶ່ງ ໃນປະເທດດ້ອຍພັດທະນາ, ຜະລິດຕະພັນເຫລົ່ານັ້ນຕ້ອງໄດ້ຕາມເງື່ອນໄຂຂອງການປ່ຽນຮູບຢ່າງພຽງພໍ ຫລື ຕາມລະບຽບແຫຼ່ງກຳເນີດສິນຄ້າແບບສະເພາະຜະລິດຕະພັນ (PSR) ເຊັ່ນ: ແຜ່ນແພ, ເຄື່ອງນຸ່ງຫົ່ມ ແລະ ອື່ນໆ.

## 2.4 ລະບຽບແຫຼ່ງກຳເນີດສິນຄ້າຂອງ ນໍເວ

ນໍເວ ອະນຸຍາດໃຫ້ປະເທດຜູ້ສົ່ງອອກ ນຳໃຊ້ວັດຖຸດິບທີ່ມີແຫຼ່ງກຳເນີດຈາກປະເທດອື່ນ ເຂົ້າໃນຂະບວນ ການຜະລິດໄດ້ ໂດຍມີມູນຄ່າບໍ່ເກີນ 40% ຂອງລາຄາ FOB ເຊັ່ນ:

- ການສະສົມວັດຖຸດິບພາຍໃນອາຊຽນ;
- ການສະສົມວັດຖຸດິບມາຈາກນໍເວ;
- ການສະສົມວັດຖຸດິບຈາກສະຫະພາບເອີຣົບ (EU) ແລະ ສະວິດເຊີແລນ; ຫລື
- ສິນຄ້າຕ້ອງຜ່ານຂະບວນການຜະລິດ ຈົນມີການປ່ຽນລະຫັດພາສີເຄົ້າໃນລະດັບ 4 ໂຕເລກ (Change in Tariff Heading : CTH).

---

[4] PSR: ແມ່ນການກຳນົດໃຫ້ຜະລິດຕາມແບບສະເພາະຜະລິດຕະພັນ ຊຶ່ງໄດ້ມີການກຳນົດຢ່າງລະອຽດຂອງ ຂັ້ນຕອນການຜະລິດສິນຄ້າແຕ່ລະປະເພດ.

[5] ການປ່ຽນຮູບຢ່າງພຽງພໍ ແມ່ນການປ່ຽນລະຫັດພາສີເຄົ້າໃນລະດັບ 4 ຕົວເລກ

## 2.5 ລະບຽບແຫຼ່ງກຳເນີດສິນຄ້າຂອງ ລັດເຊຍ, ກາຊັກສະຖານ ແລະ ເບລາລຸດ

ສຳລັບສິນຄ້າທີ່ນຳໃຊ້ວັດຖຸດິບຈາກຕ່າງປະເທດເພື່ອມາຜະລິດ ຈະຕ້ອງປະຕິບັດຕາມລະບຽບທີ່ກຳນົດ ເຊັ່ນ:

(ກ). ວັດຖຸດິບ ຫຼື ສິ້ນສ່ວນນຳເຂົ້າຈາກຕ່າງປະເທດ ຕ້ອງບໍ່ເກີນ 50% ຂອງລາຄາໂຮງງານ;

(ຂ). ສຳລັບສິນຄ້າທີ່ມີມູນຄ່າບໍ່ເກີນ 5,000 ໂດລາສະຫະລັດ ບໍ່ຈຳເປັນຕ້ອງໃຊ້ ຟອມ A, ແຕ່ຕ້ອງຢັ້ງຢືນ ໂດຍການແຈ້ງໃບຮັບເງິນ ຫລື ເອກະສານຢັ້ງຢືນອື່ນໆ ທີ່ລະບຸວ່າມູນຄ່າຂອງສິນຄ້າດັ່ງກ່າວບໍ່ເກີນລາຄາດັ່ງທີ່ໄດ້ກຳນົດ ຫຼື ເອກະສານຂົນສົ່ງອື່ນໆ.

## 2.6 ລະບຽບແຫຼ່ງກຳເນີດສິນຄ້າຂອງ ສະວິດເຊີແລນ

ສຳລັບສິນຄ້າທີ່ນຳໃຊ້ວັດຖຸດິບຈາກຕ່າງປະເທດເພື່ອມາຜະລິດ ສາມາດນຳໃຊ້ກົດການສະສົມມູນຄ່າເພີ່ມ (RVC)ໄດ້ ດັ່ງລາຍລະອຽດລຸ່ມນີ້:

(ກ). ຜູ້ຜະລິດສາມາດນຳໃຊ້ວັດຖຸດິບຈາກ ສະວິດເຊີແລນ, ນໍເວ ຫຼື ສະຫະພາບເອີຣົບ ມາຜະລິດໄດ້ໂດຍວັດຖຸດິບດັ່ງກ່າວ ຕ້ອງມີເອກະສານຢັ້ງຢືນແຫລ່ງກຳເນີດສິນຄ້າ EURO 1 ຈາກສະວິດເຊີແລນ, ນໍເວ ຫຼື ສະຫະພາບເອີຣົບ ຄັດຕິດ;

(ຂ). ຜູ້ຜະລິດສາມາດນຳໃຊ້ວັດຖຸດິບ ຈາກປະເທດສະມາຊິກອາຊຽນ (ຍົກເວັ້ນສິງກາໂປ ແລະ ບຣູໄນ) ເພື່ອມາຜະລິດຕາມເງື່ອນໄຂກົດການສະສົມແຫຼ່ງກຳເນີດສິນຄ້າ(Cumulation Rule) ໄດ້ໂດຍວັດຖຸດິບດັ່ງກ່າວຈະຕ້ອງມີໃບຢັ້ງຢືນແຫລ່ງກຳເນີດສິນຄ້າ ຟອມ A ຈາກປະເທດຕົ້ນ ກຳເນີດຄັດຕິດ;

(ຄ). ສິນຄ້າ ຕ້ອງຜ່ານຂະບວນການປ່ຽນແປງສະພາບ ຫຼື ຂະບວນການຜະລິດຢ່າງຫຼວງຫຼາຍ (Sufficient process) ຈົນມີການປ່ຽນລະຫັດພາສີເຄົ້າໃນລະດັບ 4 ໂຕເລກ (Change in Tariff Heading : CTH

## 2.7 ລະບຽບແຫຼ່ງກຳເນີດສິນຄ້າຂອງ ຕວກກີ

ສຳລັບສິນຄ້າທີ່ນຳໃຊ້ວັດຖຸດິບຈາກຕ່າງປະເທດເພື່ອມາຜະລິດ ຈະຕ້ອງປະຕິບັດຕາມລະບຽບທີ່ກຳນົດ ເຊັ່ນ:

- ມູນຄ່າວັດຖຸດິບທີ່ບໍ່ມີແຫຼ່ງກຳເນີດ ຕ້ອງບໍ່ເກີນ 10 % ຂອງມູນຄ່າສິນຄ້າສົ່ງອອກ; ຫລື
- ສາມາດນຳໃຊ້ວັດຖຸດິບຈາກຕວກກີ, ຈາກປະເທດສະມາຊິກອາຊຽນ ເພື່ອມາສະສົມພາຍໃນໄດ້;
- ສຳລັບສິນຄ້າທີ່ມີມູນຄ່າບໍ່ເກີນ 500 ຢູໂຣ ແລະ ບໍ່ມີຈຸດປະສົງທາງການຄ້າ. ສິນຄ້າຕິດຕົວຜູ້ໂດຍສານ ທີ່ມີມູນຄ່າບໍ່ເກີນ 1200 ຢູໂຣ (EUR) ແມ່ນບໍ່ຈຳເປັນຕ້ອງຂໍ ຟອມ A.

## 2.8 ລະບຽບແຫຼ່ງກຳເນີດສິນຄ້າຂອງ ອົດສະຕາລີ

ສຳລັບສິນຄ້າທີ່ນຳໃຊ້ວັດຖຸດິບຈາກຕ່າງປະເທດເພື່ອມາຜະລິດ ຈະຕ້ອງປະຕິບັດຕາມລະບຽບທີ່ກຳນົດ ເຊັ່ນ:

- ສາມາດນຳໃຊ້ວັດຖຸດິບຈາກກຸ່ມປະເທດດ້ອຍພັດທະນາດ້ວຍກັນ ເພື່ອມາສະສົມມູນຄ່າເພີ່ມໄດ້ບໍ່ເກີນ 50% ຂອງຕົ້ນທຶນການຜະລິດ;
- ສາມາດນຳໃຊ້ວັດຖຸດິບຈາກປະເທດອົດສະຕາລີ, ປະເທດກຳລັງພັດທະນາ ແລະ ປະເທດໝູ່ເກາະດອນ (Island Countries) ທີ່ ອົດສະຕາລີ ເປັນພາຄີ ເພື່ອນຳມາແປຮູບ, ແຕ່ມູນຄ່າຂອງວັດຖຸດິບທີ່ນຳມາສະສົມເພື່ອແປຮູບແມ່ນບໍ່ໃຫ້ເກີນ 25% ຂອງຕົ້ນທຶນການຜະລິດ; ຫລື
- ສິນຄ້າຕ້ອງຜ່ານການແປຮູບຢ່າງພຽງພໍ (Substantial Transformation) ແລະ ຂັ້ນຕອນສຸດທ້າຍຂອງການຜະລິດ ຕ້ອງດຳເນີນຢູ່ປະເທດດ້ອຍພັດທະນາ ທີ່ເປັນຜູ້ສົ່ງອອກ.
- ສິນຄ້າບາງປະເພດຕ້ອງຜ່ານຂະບວນການຜະລິດ ແບບສະເພາະຜະລິດຕະພັນ (PSR) ເຊັ່ນ: ຜະລິດຕະພັນແຜ່ນແຜ່, ເຄື່ອງຕ່ຳດ້ວຍມື, ເຄື່ອງນຸ່ງຫົ່ມ ແລະ ອື່ນໆ.

## 2.9 ລະບຽບແຫຼ່ງກຳເນີດສິນຄ້າຂອງ ການາດາ

ສຳລັບສິນຄ້າທີ່ນຳໃຊ້ວັດຖຸດິບຈາກຕ່າງປະເທດເພື່ອມາຜະລິດ ຈະຕ້ອງປະຕິບັດຕາມລະບຽບທີ່ກຳນົດ ເຊັ່ນ:

- ຜູ້ສົ່ງອອກສາມາດນຳເອົາວັດຖຸດິບຈາກປະເທດດ້ອຍພັດທະນາດ້ວຍກັນ ມາສະສົມໄດ້ ແລະ ຍັງສາມາດນຳເອົາວັດຖຸດິບທີ່ມີແຫຼ່ງກຳເນີດຈາກປະເທດກຳລັງພັດທະນາ ມາສະສົມໄດ້ນຳອີກແຕ່ມູນຄ່າການສະສົມແມ່ນບໍ່ໃຫ້ເກີນ 20% ຂອງລາຄາສິນຄ້າຈາກໂຮງງານ. ນອກນັ້ນ, ປະເທດດ້ອຍພັດທະນາ ແມ່ນສາມາດນຳໃຊ້ວັດຖຸດິບຂອງການາດາມາສະສົມໄດ້.
- ການສ້າງມູນຄ່າເພີ່ມແມ່ນບໍ່ຕ່ຳກວ່າ 40% ແຕ່ຖ້າເປັນສິນຄ້າປະເພດເຄື່ອງນຸ່ງຫົ່ມ ແມ່ນໃຫ້ຜະລິດຈາກແຜ່ນແພ ຫຼື ສິ້ນສ່ວນທີ່ມີແຫຼ່ງກຳເນີດຈາກປະເທດດ້ອຍພັດທະນາ ແລະ ປະເທດກຳລັງພັດທະນາທີ່ໄດ້ສິດທິພິເສດຈາກ ການາດາ.

## III. ລະບຽບການອອກຟອມ A
### Form A ແມ່ນຫຍັງ?

Form A ແມ່ນໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ (Certificate of Origin: CO) ທີ່ນຳໃຊ້ເພື່ອເປັນບ່ອນອີງໃນການຂໍຍົກເວັ້ນ ຫຼື ຫຼຸດຜ່ອນອັດຕາພາສີຂາເຂົ້າ ຈາກປະເທດຜູ້ໃຫ້ GSP.

ການຊອກຮູ້ວ່າສິນຄ້າໄດ້ເງື່ອນໄຂແຫຼ່ງກຳເນີດ:

- ຜູ້ຜະລິດ ຫຼື ຜູ້ສົ່ງອອກ ສະໜອງເລກລະຫັດພາສີສິນຄ້າຂອງປະເທດນຳເຂົ້າ 8 ຕົວເລກ ໃຫ້ກັບເຈົ້າໜ້າທີ່ອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ;
- ເຈົ້າໜ້າທີ່ອອກຟອມກວດສິນຄ້າດັ່ງກ່າວໃນບັນຊີໄດ້ຮັບສິດທິພິເສດຂອງປະເທດທີ່ໃຫ້GSP;
- ເຈົ້າໜ້າທີ່ກວດເງື່ອນໄຂການຜະລິດສິນຄ້າ ຫຼື ລະບຽບແຫຼ່ງກຳເນີດສິນຄ້າ;
- ແຈ້ງເງື່ອນໄຂການຜະລິດສິນຄ້າ ຫຼື ລະບຽບແຫຼ່ງກຳເນີດສິນຄ້າ ໃຫ້ບໍລິສັດ.

*ກ່ອນການຂໍໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ ຟອມ A, ບໍລິສັດຜູ້ຜະລິດ ຫຼື ຜູ້ສົ່ງອອກ ຕ້ອງໄດ້ຂໍການຮັບຮອງສິນຄ້າໄດ້ແຫຼ່ງກຳເນີດກ່ອນ (Confirmation of Product Ebigibility: CPE), ຈາກນັ້ນຈຶ່ງສາມາດຂໍໃບຢັ້ງຢືນແຫຼ່ງກກຳເນີດສິນຄ້າຟອມ A.*

### 3.1 ຂັ້ນຕອນການຂໍໃບຮັບຮອງສິນຄ້າໄດ້ແຫຼ່ງກຳເນີດ (CPE)

1. ຜູ້ຜະລິດ ຫຼື ຜູ້ສົ່ງອອກ ຍື່ນຄຳຮ້ອງພ້ອມດ້ວຍ ເອກະສານຄັດຕິດ ດັ່ງນີ້:
   - ໃບຄຳຮ້ອງ;
   - ໃບແຈ້ງລາຄາ;
   - ໜັງສືຮັບຮອງລາຍລະອຽດຂັ້ນຕອນການຜະລິດ, ໃບຄິດໄລ່ຕົ້ນທຶນ ແລະ ແຜນວາດຂະບວນການຜະລິດ;
   - ເອກະສານຢັ້ງຢືນການໄດ້ມາ ຫຼື ການນຳເຂົ້າວັດຖຸດິບ.
   - ໃບແຈ້ງແບບຢ່າງລາຍເຊັນ ແລະ ກາຈ້ຳຂອງບໍລິສັດ;
2. ເຈົ້າໜ້າທີ່ກວດກາຄວາມຖືກຕ້ອງຂອງເອກະສານ;
3. ລົງຢັ້ງຢາມເບິ່ງຂະບວນການຜະລິດຕົວຈິງຢູ່ໂຮງງານ;
4. ອອກໃບຮັບຮອງສິນຄ້າໄດ້ແຫຼ່ງກຳເນີດ.

---

[6] ໃບຮັບຮອງສິນຄ້າໄດ້ແຫຼ່ງກຳເນີດ CPE: ເປັນເອກະສານທີ່ເຈົ້າໜ້າທີ່ຢັ້ງຢືນແຫຼ່ງກຳເນີດສິນຄ້າອອກໃຫ້ແກ່ຜູ້ສົ່ງອອກ ເພື່ອຮັບຮອງວ່າສິນຄ້າໄດ້ເກີດຂຶ້ນ ຫຼື ຜ່ານຂະບວນການຜະລິດຢູ່ ສປປ ລາວ ຕາມເງື່ອນໄຂຂອງລະບຽບແຫຼ່ງກຳເນີດສິນຄ້າ, ເປັນເອກະສານອ້າງອີງທີ່ສຳຄັນໃນການຂໍໃບຢັ້ງຢືນແຫຼ່ງກຳເນີດສິນຄ້າຟອມເອ ໃນຄັ້ງຕໍ່ໆໄປ. ໃບ CPE ດັ່ງກ່າວ ໃຫ້ຂໍໃນເວລາສິນຄ້າສົ່ງອອກເປັນຄັ້ງທຳອິດເທົ່ານັ້ນ, ໂດຍມີອາຍຸການນຳໃຊ້ 1 ປີ.

*ສຳລັບສິນຄ້າທີ່ສາມາດກຳນົດເງື່ອນໄຂແຫຼ່ງກຳເນີດໄດ້ໂດຍງ່າຍດາຍ ເຊັ່ນ: ສິນຄ້າກະສິກຳ, ເຄື່ອງປ່າຂອງດົງ, ແຮ່ທາດ ແລະ ອື່ນໆ ແມ່ນບໍ່ຕ້ອງຂໍໃບ CPE. ຜູ້ສົ່ງອອກສາມາດນຳໃຊ້ເອກະສານຢັ້ງຢືນການໄດ້ມາຂອງສິນຄ້າ ເຊັ່ນ: ໃບຢັ້ງຢືນການຊື້ - ຂາຍ ຫຼື ໃບບິນການເກັບຊື້ອື່ນໆແທນໄດ້.*

[7] ລາຍລະອຽດ ແລະ ແບບຟອມຕ່າງໆສາມາດເຂົ້າໄປເບິ່ງໄດ້ທີ່ www.laotradeportal.gov.la

# ແຜນວາດຂັ້ນຕອນການຂໍໃບຮັບຮອງສິນຄ້າໄດ້ແຫຼ່ງກຳເນີດ (CPE)

**(1)** ຜູ້ສົ່ງອອກ ↔ ເອກະສານປະກອບ

- ໃບຄຳຮ້ອງ;
- ໃບແຈ້ງລາຄາ;
- ໜັງສືຮັບຮອງລາຍລະອຽດຂັ້ນຕອນການຜະລິດ, ໃບຄິດໄລ່ຕົ້ນທຶນ ແລະ ແຜນວາດຂະບວນການຜະລິດ;
- ເອກະສານຢັ້ງຢືນການໄດ້ມາ ຫຼື ການນຳເຂົ້າວັດຖຸດິບ.

ຍື່ນເອກະສານ

↓

**(2)** ເຈົ້າໜ້າທີ່ກວດກາຄວາມຖືກຕ້ອງຂອງເອກະສານ ↔ ໄລຍະເວລາຂອງການກວດກາເອກະສານ ພາຍໃນ 01 ວັນລັດຖະການ

↓

**(3)** ລົງຢ້ຽມຢາມໂຮງງານເບິ່ງຂະບວນການຜະລິດຕົວຈິງ

↓

**(4)** ເຈົ້າໜ້າທີ່ ອອກໃບຮັບຮອງສິນຄ້າໄດ້ແຫຼ່ງກຳເນີດ (CPE) ↔ ໄລຍະເວລາຂອງການອອກໃບ CPE ແມ່ນ ພາຍໃນ 01 ວັນ ລັດຖະການ ນັບຈາກມື້ລົງຢ້ຽມຢາມໂຮງງານ

## 3.2 ຂັ້ນຕອນ ແລະ ການປະກອບເອກະສານຂໍອອກໃບຢັ້ງຢືນແຫຼ່ງກໍາເນີດສິນຄ້າ ຟອມ A

1. ຜູ້ຜະລິດ ຫຼື ຜູ້ສົ່ງອອກ ຍື່ນຄໍາຮ້ອງຟອມ A ພ້ອມດ້ວຍເອກະສານປະກອບ ດັ່ງນີ້;
   - ຟອມໃບຢັ້ງຢືນແຫຼ່ງກໍາເນີດສິນຄ້າ (ຟອມ A) ທີ່ຕື່ມຂໍ້ມູນຄົບຖ້ວນ;
   - ສໍາເນົາໃບຮັບຮອງສິນຄ້າໄດ້ແຫຼ່ງກໍາເນີດ CPE;
   - ໃບແຈ້ງລາຄາ ແລະ ໃບຫຸ້ມຫໍ່ສິນຄ້າ;
   - ໃບແຈ້ງພາສີເປັນລາຍລະອຽດ (ໃບ ບໍ ພາສີສົ່ງອອກ);
   - ສໍາເນົາໃບຂົນສົ່ງ.
2. ເຈົ້າໜ້າທີ່ກວດກາຄວາມຖືກຕ້ອງຂອງເອກະສານ;
3. ເຈົ້າໜ້າທີ່ອອກໃບຢັ້ງຢືນແຫຼ່ງກໍາເນີດສິນຄ້າ ຟອມ A.

## 3.3 ຄ່າທໍານຽມ ໃນການອອກໃບຢັ້ງຢືນແຫຼ່ງກໍາເນີດສິນຄ້າ Form A

ຄ່າທໍານຽມໃນການອອກໃບຢັ້ງຢືນແຫຼ່ງກໍາເນີດສິນຄ້າ ຟອມ A ໄດ້ກໍານົດໄວ້ໃນຄໍາແນະນໍາ ກ່ຽວກັບການຢັ້ງຢືນແຫຼ່ງກໍາເນີດສິນຄ້າທີ່ໄດ້ຮັບສິດທິພິເສດ ສະບັບ ເລກທີ 2225/ອຄ.ກຂອ, ລົງວັນທີ 5 ທັນວາ 2014, ຊຶ່ງໄດ້ກໍານົດມູນຄ່າການສົ່ງອອກຕົວຈິງ ດັ່ງນີ້:

| ມູນຄ່າສົ່ງອອກເປັນເງິນໂດລາສະຫະລັດ (USD) | ຄ່າທໍານຽມເປັນເງິນກີບ (KIP) |
|---|---|
| ຕໍ່າກວ່າ 10.000 | 40.000 |
| ແຕ່ 10.001 ຫາ 30.000 | 60.000 |
| ແຕ່ 30.001 ຫາ 60.000 | 80.000 |
| ແຕ່ 60.001 ຂຶ້ນໄປ | 100.000 |

[8] ລາຍລະອຽດ ແລະ ແບບຟອມຕ່າງໆສາມາດເຂົ້າໄປເບິ່ງໄດ້ທີ່ www.laotradeportal.gov.la

## ແຜນວາດຂັ້ນຕອນການຂໍໃບຢັ້ງຢືນແຫຼ່ງກຳເນີດສິນຄ້າຟອມ A

**(1)** ຜູ້ສົ່ງອອກ

ຍື່ນເອກະສານ

ເອກະສານປະກອບ

- ສຳເນົາໃບຮັບຮອງສິນຄ້າໄດ້ແຫຼ່ງກຳເນີດ CPE;
- ຟອມໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ (ຟອມ A) ທີ່ຕື່ມຂໍ້ມູນຄົບຖ້ວນ;
- ໃບແຈ້ງລາຄາ ແລະ ໃບຫຸ້ມຫໍ່ສິນຄ້າ;
- ໃບແຈ້ງພາສີເປັນລາຍລະອຽດ (ໃບ ບໍ ພາສີສົ່ງອອກ);
- ສຳເນົາໃບຂົນສົ່ງ.

**(2)** ເຈົ້າໜ້າທີ່ກວດກາຄວາມຖືກຕ້ອງຂອງເອກະສານ

**(3)** ເຈົ້າໜ້າທີ່ອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າຟອມ A

ໄລຍະເວລາຂອງການອອກ ຟອມ A ພາຍໃນ 03 ວັນລັດຖະການ

## IV. ແນະນຳການຕື່ມຂໍ້ມູນໃສ່ ຟອມ A

ການພິມຂໍ້ມູນຕ່າງໆໃສ່ ຟອມ A ຈະຕ້ອງພິມເປັນພາສາອັງກິດຕົວພິມໃຫຍ່ເທົ່ານັ້ນ ຊຶ່ງການຕື່ມຂໍ້ມູນໃສ່ແຕ່ລະຫ້ອງ ຄວນປະຕິບັດດັ່ງນີ້:

ຫ້ອງທີ 1 : ໃຫ້ລະບຸລາຍລະອຽດ ກ່ຽວກັບ ຜູ້ຜະລິດ ຫຼື ຜູ້ສົ່ງອອກສິນຄ້າ ຊຶ່ງປະກອບມີ : ຊື່, ທີ່ຢູ່, ປະເທດ, ເບີໂທ, ເບີແຟັກ... (ປະເທດຕົ້ນທາງ).

ຫ້ອງທີ 2 : ໃຫ້ລະບຸລາຍລະອຽດ ກ່ຽວກັບ ຜູ້ນຳເຂົ້າສິນຄ້າຕົວຈິງ ຊຶ່ງປະກອບມີ : ຊື່, ທີ່ຢູ່, ປະເທດ, ເບີໂທ, ເບີແຟັກ... (ປະເທດປາຍທາງ).

ຫ້ອງທີ 3: ໃຫ້ລະບຸວິທີການຂົນສົ່ງ ແລະ ເສັ້ນທາງ ທີ່ສິນຄ້າໄດ້ຖືກເຄື່ອນຍ້າຍອອກຈາກດ່ານປະເທດຜູ້ສົ່ງອອກ (ໃຫ້ລະບຸເທົ່າທີ່ຮູ້).

ຫ້ອງທີ 4 : ໃຊ້ສະເພາະເຈົ້າໜ້າທີ່ (ບໍ່ໃຫ້ຕື່ມຫຍັງໃສ່).

ຫ້ອງທີ 5 : ໃຫ້ລະບຸລຳດັບ ຫຼື ຈຳນວນລາຍການຂອງສິນຄ້າ.

ຫ້ອງທີ 6 : ໃຫ້ລະບຸເຄື່ອງໝາຍ ແລະ ຈຳນວນສິນຄ້າທີ່ຈະສົ່ງອອກ.

ຫ້ອງທີ 7 : ໃຫ້ລະບຸລາຍລະອຽດຂອງສິນຄ້າ ເຊັ່ນ: ຊື່ສິນຄ້າ, ຈຳນວນລວມສິນຄ້າ (ຕ້ອງລະບຸຫົວໜ່ວຍຂອງສິນຄ້າ ຕົວຢ່າງ: ຜືນ, ຊຸດ, ກິໂລ...), ຈຳນວນຫີບຫໍ່ (ຫົວໜ່ວຍເປັນກ່ອງ/ຫີບ), ນ້ຳໜັກລວມ ຫຼື ລາຍລະອຽດຕ່າງໆ ກ່ຽວກັບ ສິນຄ້າ.

ຫ້ອງທີ 8 : ໃຫ້ລະບຸເຄື່ອງໝາຍເງື່ອນໄຂຂອງການໄດ້ແຫຼ່ງກຳເນີດສິນຄ້າ (ລາຍລະອຽດໃຫ້ເບິ່ງຂໍ້ມູນທາງດ້ານຫຼັງແບບຟອມ).

ຫ້ອງທີ 9 : ໃຫ້ລະບຸຈຳນວນນ້ຳໜັກລວມ ຫຼື ຫົວໜ່ວຍປະລິມານອື່ນໆ ຂອງສິນຄ້າ.

ຫ້ອງທີ 10: ໃຫ້ລະບຸເລກທີ ແລະ ວັນທີ ເດືອນ ປີ ຂອງໃບແຈ້ງລາຄາສົ່ງອອກ.

ຫ້ອງທີ 11: ໃຊ້ສະເພາະຫ້ອງການເຈົ້າໜ້າທີ່ອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າເທົ່ານັ້ນ, ເຊິ່ງເຈົ້າໜ້າທີ່ກວດຟອມຈະເປັນຜູ້ເຊັນຫຍໍ້, ລົງລາຍເຊັນຂອງຜູ້ທີ່ມີສິດເຊັນຟອມ ພ້ອມດ້ວຍກາປະທັບ ແລະ ລະບຸວັນທີ່ອອກຟອມ.

ຫ້ອງທີ 12: ໃຊ້ສຳລັບຜູ້ຜະລິດ ຫຼື ຜູ້ສົ່ງອອກສິນຄ້າ ເຊິ່ງຈະແບ່ງອອກມີ 03 ຊ່ອງຫວ່າງຄື: ຊ່ອງຫວ່າງທີ 01 ໃຫ້ລະບຸຊື່ປະເທດຜູ້ຜະລິດສິນຄ້າ (ປະເທດຕົ້ນກຳເນີດຂອງສິນຄ້າ), ຊ່ອງຫວ່າງທີ 2 ໃຫ້ລະບຸຊື່ປະເທດຜູ້ນຳເຂົ້າສິນຄ້າຕົວຈິງ ແລະ ຊ່ອງຫວ່າງທີ 03 ໃຫ້ໃສ່ແຂວງ ທີ່ອອກຟອມ. ຫຼັງຈາກນັ້ນ, ໃຫ້ຜູ້ທີ່ມີສິດເຊັນຟອມຂອງບໍລິສັດດັ່ງກ່າວລົງລາຍເຊັນ ພ້ອມດ້ວຍຈ້ຳກາຂອງບໍລິສັດ.

## V. ຄຳອະທິບາຍດ້ານຫຼັງ Form A

ວິທີພິມຂໍ້ມູນໃສ່ Form A ໃຫ້ເບິ່ງໃນຄຳອະທິບາຍຢູ່ດ້ານຫຼັງຂອງແບບຟອມ ຊຶ່ງມີບາງເນື້ອໃນສຳຄັນ ດັ່ງລາຍລະອຽດລຸ່ມນີ້:

### 1.ບັນດາປະເທດທີ່ຮັບເອົາ ຟອມ A ເພື່ອຈຸດປະສົງໃຫ້ສິດທິພິເສດທາງການຄ້າ ມີ:

ອົດສະຕາລີ*, ເບລາລູດສ໌, ການາດາ, ຍີ່ປຸ່ນ, ນິວຊີແລນ**, ນໍເວ, ຣັດເຊຍ, ສະວິດເຊີແລນ ລວມທັງລິກເຕີນສະຕາຍ (Liechtenstein)***, ຕວັກກີ, ສະຫະລັດອາເມລິກາ**** ແລະ ສະຫະພາບເອີຣົບ ມີສະມາຊິກ 28 ປະເທດ ຄື: ໂອຕຣິສ, ແບນຊິກ, ບຸນກາລີ, ໄຊປຣັສ, ສາທາລະນະລັດເຊັກ, ເດນມາກ, ແອັດໂຕນີ, ເຢຍລະມັນ, ເກຣັກ, ແຟງລັງ, ຝຣັ່ງ, ຮົງກາລີ, ອຽກລັງ, ອີຕາລີ, ລັດວີ, ລີທົວນີ, ລຸກຊຳບວກ, ມານຕາ, ເນເທີແລນ, ໂປໂລ້ຍ, ປ໊ອກຕຸຍການ, ໂຣມານີ, ສະໂລວັກ, ສະໂລເວນີ, ແອັດສະປາຍ, ສະວິເດັນ, ອັງກິດ ແລະ ໂຄຣເອເຊຍ.

### 2. ເງື່ອນໄຂທົ່ວໄປ:

ສຳລັບສິນຄ້າທີ່ຕ້ອງການຢັ້ງຢືນແຫຼ່ງກຳເນີດເພື່ອໄດ້ຮັບສິດທິພິເສດ ຕ້ອງປະຕິ ບັດດັ່ງນີ້ :

(ກ). ຕື່ມຂໍ້ມູນຂອງສິນຄ້າ ຫຼື ຜະລິດຕະພັນທີ່ເຫັນວ່າ ສາມາດປະຕິບັດໄດ້ເງື່ອນໄຂການຜະລິດຂອງລະບຽບແຫຼ່ງກຳເນີດສິນຄ້າຈາກປະເທດທີ່ໃຫ້ສິດທິພິເສດ (ປະເທດປາຍທາງ). ໂດຍຂໍ້ມູນທີ່ຈະຕື່ມລົງໃນແບບຟອມຈະຕ້ອງມີຄວາມລະອຽດ ແລະ ຄົບຖ້ວນ ທັງນີ້ກໍ່ເພື່ອຄວາມສະ ດວກໃນເວລາທີ່ເຈົ້າໜ້າທີ່ພາສີຂອງປະເທດປາຍທາງກວດກາສິນຄ້າ ແລະ ເອກະສານຂາເຂົ້າ.

(ຂ). ຕ້ອງປະຕິບັດຕາມລະບຽບແຫຼ່ງກຳເນີດສິນຄ້າຂອງປະເທດປາຍທາງ. ໃນນັ້ນ,ທຸກລາຍການສິນຄ້າທີ່ຖືກຈັດສົ່ງ ຕ້ອງໄດ້ເງື່ອນໄຂແຫຼ່ງກຳເນີດສິນຄ້າ.

(ຄ). ປະຕິບັດຕາມເງື່ອນໄຂການຂົນສົ່ງ ຂອງປະເທດປາຍທາງ. ໂດຍທົ່ວໄປສິນຄ້າທີ່ສົ່ງອອກໄປນັ້ນຕ້ອງມີການຂົນສົ່ງໂດຍກົງ ຈາກປະເທດຜູ້ສົ່ງອອກໄປຫາປະເທດຜູ້ນຳເຂົ້າ, ແຕ່ສ່ວນຫຼາຍແລ້ວ ປະເທດທີ່ໃຫ້ສິດທິພິເສດແມ່ນຍອມຮັບການຂົນສົ່ງໂດຍຜ່ານປະເທດທີ່ສາມ ໂດຍອີງໃສ່ບາງເງື່ອນໄຂ.

### 3. ການຕື່ມຂໍ້ມູນໃນຫ້ອງທີ 8

ສຳລັບສິນຄ້າທີ່ໄດ້ຮັບສິດທິພິເສດ ສາມາດເປັນສິນຄ້າທີ່ໄດ້ມາ ໂດຍນຳໃຊ້ວັດຖຸດິບພາຍໃນປະເທດທັງໝົດ (WO) ຫລື ບໍ່ໄດ້ນຳໃຊ້ວັດຖຸດິບພາຍໃນທັງໝົດ (ສິນຄ້າທີ່ນຳວັດຖຸດິບເຂົ້າມາຜະລິດ) ແຕ່ມັນກໍຮອດພັນເຖິງ ລະບຽບຂອງປະເທດນຳເຂົ້າ ຫຼື ຜ່ານຂະບວນການຜະລິດຢ່າງຫຼວງຫຼາຍຕາມຫຼັກການທີ່ກຳນົດໄວ້ ໃນລະບຽບແຫຼ່ງກຳເນີດສິນຄ້າຂອງປະເທດນຳເຂົ້າ.

(ກ).ສຳລັບສິນຄ້າທີ່ໄດ້ມາ ຫຼື ຜະລິດໂດຍນຳໃຊ້ວັດຖຸດິບພາຍໃນປະເທດທັງໝົດ (WO): ການສົ່ງອອກສິນຄ້າປະເພດນີ້ໄປຍັງບັນດາປະເທດທີ່ນອນຢູ່ໃນຫົວຂໍ້ທີ I ແມ່ນໃຫ້ໃສ່ເຄື່ອງໝາຍ “P”

---

[9] ໄດ້ເຂົ້າເປັນສະມາຊິກຂອງ EU ໃນວັນທີ 28 ໃນວັນທີ 01 ກໍລະກົດ 2013

[10] ເງື່ອນໄຂດ້ານພູມມີປະເທດ, ສະພາບພູມມີສາດ...

ໃນຫ້ອງ ທີ 08 (ສຳລັບປະເທດອົດສະຕາລີ ແລະ ນິວຊີແລນ ໃນຫ້ອງທີ່ 08 ບໍ່ຈຳເປັນຕ້ອງລະບຸຫຍັງໃສ່).

(ຂ). ສຳລັບສິນຄ້າທີ່ຜ່ານຂະບວນການຜະລິດຢ່າງພຽງພໍ ແລະ ສົ່ງອອກໄປຍັງບັນດາປະເທດຂ້າງລຸ່ມນີ້, ການຕື່ມຂໍ້ມູນໃນຫ້ອງທີ 8 ຕ້ອງໄດ້ປະຕິບັດຄື:

(1). ສະຫະລັດອາເມລິກາ: ສຳລັບສິນຄ້າທີ່ນຳມາຈາກປະເທດດຽວເພື່ອທຳການຜະລິດແມ່ນໃຫ້ໃສ່ສັນຍາລັກ "Y" ໃນຫ້ອງທີ 08; ແຕ່ສຳລັບສຳລັບສິນຄ້າທີ່ນຳມາຈາກຫຼາຍປະເທດເພື່ອທຳການຜະລິດແມ່ນ ໃຫ້ໃສ່ສັນຍາລັກ "Z" ແລະ ຕາມດ້ວຍລາຄາຕົ້ນທຶນ ຫຼື ລາຄາຂອງວັດຖຸດິບພາຍໃນປະເທດ ແລະ ລາຄາການຂົນສົ່ງທາງກົງ, ອັດຕາສ່ວນ ຂອງລາຄາສິນຄ້າທີ່ສົ່ງອອກ (ຕົວຢ່າງ: "Y" 35% ຫຼື "Z" 35%).

(2). ການາດາ: ສຳລັບສິນຄ້າທີ່ໄດ້ເງື່ອນໄຂແຫຼ່ງກຳເນີດຕາມເງື່ອນໄຂຂະບວນການຜະລິດຂອງບັນດາປະເທດດ້ອຍພັດທະນາ ເຊິ່ງຫຼາຍກວ່າໜຶ່ງປະເທດທີ່ໄດ້ຮັບສິດແມ່ນໃຫ້ໃສ່ສັນຍາລັກ "G" ໃນຫ້ອງທີ 8; ປະເທດອື່ນແມ່ນ "F".

(3). ສະຫະພາບເອີຣົບ, ຍີ່ປຸ່ນ, ນໍເວ, ສະວິດເຊີແລນ ລວມທັງລິກເຕິນສະຕາຍ ແລະ ຕວັກກີ: ໃຫ້ໃສ່ສັນຍາລັກ "W" ໃນຫ້ອງທີ 8, ຕາມດ້ວຍລະຫັດພາສີຂອງສິນຄ້ານັ້ນ (HS code) ເຊິ່ງລະຫັດພາສີນັ້ນຕ້ອງເປັນລະຫັດເຄົ້າໃນລະດັບ 4 ຕົວເລກ.

(4). ຣັດເຊຍ: ສຳລັບສິນຄ້າສົ່ງອອກທີ່ມີການສ້າງມູນຄ່າເພີ່ມເພື່ອໃຫ້ໄດ້ສິດທິພິເສດ, ໃຫ້ໃສ່ "Y" ໃນຫ້ອງທີ 8 ຕາມດ້ວຍມູນຄ່າຂອງວັດຖຸດິບທີ່ນຳເຂົ້າມາ ແລະ ເປັນສັດສ່ວນທີ່ຊັດເຈນໂດຍການຄິດເປັນເປີເຊັນ ສົມທຽບກັບລາຄາຂອງສິນຄ້າຮອດທ່າເຮືອ (FOB) (ຕົວຢ່າງ "Y" 45%); ສຳລັບສິນຄ້າ ທີ່ມີແຫຼ່ງກຳເນີດຈາກຫຼາຍປະເທດ ແລະ ທຳການຜະລິດໃນປະເທດດຽວ ຫຼື ຫຼາຍປະເທດແມ່ນໃຫ້ລະບຸ "Pk".

(5). ອົດສະຕາລີ ແລະ ນິວຊີແລນ: ບໍ່ຈຳເປັນຕ້ອງລະບຸຫຍັງໃສ່ໃນຫ້ອງທີ 8. ພຽງແຕ່ລະບຸໃຫ້ຈະແຈ້ງບ່ອນທີ່ຜະລິດຂຶ້ນໃສ່ໃນຫ້ອງທີ 12.

---

* ສຳລັບອົດສະຕາລີ, ເງື່ອນໄຂຫຼັກແມ່ນ ການແຈ້ງຂອງຜູ້ສົ່ງອອກ ກ່ຽວກັບ ໃບແຈ້ງລາຄາ ຊື້ - ຂາຍ ແມ່ນທາງເລືອກໜຶ່ງທີ່ຍອມຮັບໄດ້ ແຕ່ບໍ່ຕ້ອງການຢັ້ງຢືນທີ່ເປັນທາງການ.

** ບໍ່ຕ້ອງການຢັ້ງຢືນທີ່ເປັນທາງການ.

*** ສຳລັບແບບຟອມຂອງເລັກເຕນສະແຕນ ແມ່ນຕ້ອງອີງໃສ່ສົນທິສັນຍາ ສະບັບ ລົງວັນທີ 29/03/1923 ວ່າດ້ວຍສະຫະພາບ ພາສີກັບປະເທດສະວິດເຊີແລນ.

**** ສຳລັບ ສະຫະລັດອາເມລິກາ ແມ່ນບໍ່ຕ້ອງການແບບຟອມ A. ຖ້າຫາກມີຄວາມຕ້ອງການຟອມ A ແມ່ນໃຫ້ລະບຸຂໍ້ມູນລາຍລະອຽດ ກ່ຽວກັບ ການຜະລິດ ຫຼື ການປຸງແຕ່ງຢ່າງພຽງພໍຂອງສິນຄ້າເທົ່ານັ້ນ, ຊຶ່ງຄວາມຕ້ອງການດັ່ງກ່າວແມ່ນຂຶ້ນກັບພາສີຂອງເມືອງນັ້ນໆ.

# ແບບຢ່າງ Form A (ດ້ານໜ້າ)

**ORIGINAL**

**1.** Goods consigned from (exporter's business name, address, country)

MIXOK GARMENT CO.,LTD
13 NORTH ROAD, BAN SIKEUT
NAAXAYTHONG DISTRICT , VIENTIANE, LAO PDR
TEL/FAX: +856 21 555555, E-MAIL ADDRESS: MIXOK@LAO.COM

**2.** Goods consigned to (consignee's name, address, country)

ES LOGISTIK GMBH & CO.KG 8 63619
BAD ORB GERMANY

Reference No.

**GENERALIZED SYSTEM OF PREFERENCES**
**CERTIFICATE OF ORIGIN**
**(Combined declaration and certificate)**

**FORM A**

Issued in LAO PEOPLE' S DEMOCRATIC REPUBLIC

See notes overleaf

**3.** Means of transport and route (as far as known)

FROM VIENTIANE, LAO PDR
VIA BANGKOK, THAILAND, BY TRUCK
TO GERMANY BY SEA.

**4.** For official use

| 5. Item number | 6. Marks and numbers of packages | 7. Number and kind of packages; description of goods | 8. Origin criterion (see notes overleaf) | 9. Gross weight or other quantity | 10. Number and date of invoices |
|---|---|---|---|---|---|
| 1 | FROM LAO PDR VIA NONGKHAI, BANGKOK THAILAND TO GERMANY BY SEA | **MEN'S COTTON 100% SHIRTS** HS CODE: 6205.20, REF NO. 1112814, 111321 **ORDER NO.** 87000078, 87000079 | " W" 62.05 | G.W/KGS 3,440 | INVOICE NO. MX0001/2015 DATE JAN 01 2015 |
| 2 | | **BOY'S 65% POLYESTER 35% WOVEN WORKWEAR PANTS** HS CODE: 6203.49 **REF NO.** 1112825, 1113355 **ORDER NO.** 87000099, 87000100 | " W" 6203 | N.W/KGS 3,330 | |
| | | **TOTAL: THREE THOUSAND (3,000) PIECES ONLY**** ONE HUNDRED AND FIFTY (150) CARTONS ONLY****** | | | |

**11. Certification**
It is hereby certified, on the basis of control carried out, that the Declaration by the exporter is correct

Xaythideth INTHASONE

Vientiane....30/01/2015..............................
Place and date, signature and stamp of certifying authority

**12. Declaration by the exporter**
The undersigned hereby declares that the above details and statements are correct; that all the goods were
produced in LAO P.D.R
(country)
and that they comply with the origin requirements specified for those goods in the Generalized System of Preferences for goods exported to
.....................................
(importing country)

Vientiane, .....................................
Place and date, signature of authorized signatory

L 018542

NOTES (2007)

**I. Countries which accept Form A for the purposes of the generalized system of preferences (GSP):**

| | | | |
|---|---|---|---|
| Australia* | European Union: | | |
| Belarus | Austria | Finland | Netherlands |
| Canada | Belgium | France | Poland |
| Japan | Bulgaria | Hungary | Portugal |
| New Zealand** | Cyprus | Ireland | Romania |
| Norway | Czech Republic | Italy | Slovakia |
| Russian Federation | Denmark | Latvia | Slovenia |
| Switzerland including Liechtenstein*** | Estonia | Lithuania | Spain |
| Turkey | Germany | Luxembourg | Sweden |
| United States of America**** | Greece | Malta | United Kingdom |

*Full details of the conditions covering admission to the GSP in these countries are obtainable from the designated authorities in the exporting preference-receiving countries or from the customs authorities of the preference-giving countries listed above. An information note is also obtainable from the UNCTAD secretariat.*

**II. General conditions**

To qualify for preference, products must:

(a) Fall within a description of products eligible for preference in the country of destination. The description entered on the form must be sufficiently detailed to enable the products to be identified by the customs officer examining them;

(b) Comply with the rules of origin of the country of destination. Each article in a consignment must qualify separately in its own right; and

(c) Comply with the consignment conditions specified by the country of destination. In general, products must be consigned directly from the country of exportation to the country of destination, but most preference-giving countries accept passage through intermediate countries subject to certain conditions. (For Australia, direct consignment is not necessary.)

**III. Entries to be made in Box 8**

Preference products must either be wholly obtained in accordance with the rules of the country of destination or sufficiently worked or processed to fulfil the requirements of that country's origin rules.

(a) Products wholly obtained: for export to all countries listed in Section I, enter the letter "P" in Box 8 (for Australia and New Zealand, Box 8 may be left blank).

(b) Products sufficiently worked or processed: for export to the countries specified below, the entry in Box 8 should be as follows:

(1) United States of America: for single country shipments, enter the letter "Y" in Box 8; for shipments from recognized associations of counties, enter the letter "Z", followed by the sum of the cost or value of the domestic materials and the direct cost of processing, expressed as a percentage of the ex-factory price of the exported products (example: "Y" 35% or "Z" 35%).

(2) Canada: for products which meet origin criteria from working or processing in more than one eligible least developed country, enter letter "G" in Box 8; otherwise "F".

(3) The European Union, Japan, Norway, Switzerland including Liechtenstein, and Turkey: enter the letter "W" in Box 8 followed by the Harmonized Commodity Description and coding system (Harmonized System) heading at the four-digit level of the exported product (example "W" 96.18).

(4) Russian Federation: for products which include value added in the exporting preference-receiving country, enter the letter "Y" in Box 8, followed by the value of imported materials and components expressed as a percentage of the fob price of the exported products (example "Y" 45%); for products obtained in a preference-receiving country and worked or processed in one or more other such countries, enter "Pk"

(5) Australia and New Zealand: completion of Box 8 is not required. It is sufficient that a declaration be properly made in Box 12.

---

* For Australia, the main requirement is the exporter's declaration on the normal commercial invoice. Form A, accompanied by the normal commercial invoice, is an acceptable alternative, but official certification is not required.

** Official certification is not required.

*** The Principality of Liechtenstein forms, pursuant to the Treaty of 29 March 1923, a customs union with Switzerland.

**** The United States does not require GSP Form A. A declaration setting forth all pertinent detailed information concerning the production or manufacture of the merchandise is considered sufficient only if requested by the district collector of customs.

## VI. ສິ່ງທີ່ຄວນເອົາໃຈໃສ່

- ໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ Form A ຕ້ອງບໍ່ມີຮອຍແປງ, ຮອຍລຶບ. ການດັດແກ້ຂໍ້ຄວາມຂອງລາຍລະອຽດໃນໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ ຕ້ອງມີການຢັ້ງຢືນຈາກເຈົ້າໜ້າທີ່ອອກໃບຢັ້ງ ຢືນແຫຼ່ງກຳເນີດສິນຄ້າ.
- ສຳລັບເຈົ້າໜ້າທີ່ອອກຟອມຈະຕ້ອງໄດ້ຕິດຕາມ ແລະ ກວດກາຢ່າງລະອຽດ ຕໍ່ກັບ ໃບ ບໍສົ່ງອອກຂອງເຈົ້າໜ້າທີ່ພາສີ (EX3) ແລະ ໃບຂົນສົ່ງສິນຄ້າ (Truck Bill ແລະ Air Way Bill). ໃນກໍລະນີສົ່ງສິນຄ້າທາງຍົນ ຜູ້ສົ່ງອອກສາມາດສະໜອງໃບແຈ້ງພາສີເປັນລາຍລະອຽດ ແລະ ໃບຂົນສົ່ງ ໃຫ້ເຈົ້າໜ້າທີ່ຢັ້ງຢືນແຫຼ່ງກຳເນີດສິນຄ້າໄດ້ ພາຍໃນ 05 ວັນ ລັດຖະການ.
- ໄລຍະເວລາ ຂອງການເກັບຮັກສາ ເອກະສານສະບັບສຳເນົາຂອງໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ ແລະ ເອກະສານທີ່ກ່ຽວຂ້ອງ ຄົບຊຸດ ຢ່າງຕ່ຳ 3 ປີ.
- ໃນກໍລະນີ ເຈົ້າໜ້າທີ່ພາສີຂອງປະເທດຜູ້ໃຫ້ GSP ມີຄວາມສົງໃສ ແລະ ຕ້ອງການກວດກາຄືນເຖິງຄວາມຖືກຕ້ອງ, ບໍລິສັດຜູ້ສົ່ງອອກທີ່ຖືກລະບຸໃນໃບຢັ້ງຢືນແຫຼ່ງກຳເນີດສິນຄ້າຕ້ອງສາມາດສະໜອງເອກະສານຄົບຊຸດ ທີ່ເປັນສະບັບສຳເນົາ ທີ່ຕົນເກັບຮັກສາໄວ້ ໃຫ້ກັບເຈົ້າໜ້າທີ່ຢັ້ງຢືນແຫຼ່ງກຳເນີດສິນຄ້າ ຂອງ ສປປ ລາວ ເພື່ອຈະແຈ້ງຕໍ່ກັບເຈົ້າໜ້າທີ່ພາສີຂອງປະເທດຜູ້ໃຫ້ GSP ດັ່ງກ່າວ.

## VII. ຫ້ອງການເຈົ້າໜ້າທີ່ຢັ້ງຢືນແຫຼ່ງກຳເນີດສິນຄ້າ

| ລ/ດ | ຊື່ຫ້ອງການ | ຊ່ອງທາງຕິດຕໍ່ |
|---|---|---|
| 1 | ກົມການນຳເຂົ້າ ແລະ ສົ່ງອອກ, ກະຊວງອຸດສາຫະກຳ ແລະ ການຄ້າ | ໂທ: 021 454224<br>ແຟັກ: 021 454224 |
| 2 | ພະແນກອຸດສາຫະກຳ ແລະ ການຄ້າ ນະຄອນຫຼວງ | ໂທ: 021 415878<br>ແຟັກ: 021 412070 |
| 3 | ພະແນກອຸດສາຫະກຳ ແລະ ການຄ້າ ແຂວງຜົ້ງສາລີ | ໂທ: 088 210034<br>ແຟັກ: 088 210531<br>088 210065 |
| 4 | ພະແນກອຸດສາຫະກຳ ແລະ ການຄ້າ ແຂວງຫຼວງນ້ຳທາ | ໂທ/ ແຟັກ: 086 312044<br>086 312171 |
| 5 | ພະແນກອຸດສາຫະກຳ ແລະ ການຄ້າ ແຂວງອຸດົມໄຊ | ໂທ: 081 312300<br>ແຟັກ: 081 312403<br>081 312036 |
| 6 | ພະແນກອຸດສາຫະກຳ ແລະ ການຄ້າ ແຂວງບໍ່ແກ້ວ | ໂທ: 084 431031<br>ແຟັກ : 084 211044 |
| 7 | ພະແນກອຸດສາຫະກຳ ແລະ ການຄ້າ ແຂວງຫຼວງພະບາງ | ໂທ/ ແຟັກ: 071 212019 |
| 8 | ພະແນກອຸດສາຫະກຳ ແລະ ການຄ້າ ແຂວງຫົວພັນ | ໂທ/ 064 312013<br>ແຟັກ: 064 312183 |
| 9 | ພະແນກອຸດສາຫະກຳ ແລະ ການຄ້າ ແຂວງໄຊຍະບູລີ | ໂທ: 074 212465<br>ແຟັກ: 074 211459 |
| 10 | ພະແນກອຸດສາຫະກຳ ແລະ ການຄ້າ ແຂວງຊຽງຂວາງ | ໂທ: 061 312163<br>ແຟັກ: 061 312021 |
| 11 | ພະແນກອຸດສາຫະກຳ ແລະ ການຄ້າ ແຂວງວຽງຈັນ | ໂທ: 023 431031<br>ແຟັກ: 023 431574 |

| | | | |
|---|---|---|---|
| 12 | ພະແນກອຸດສາຫະກຳ ແລະ ການຄ້າ ແຂວງໄຊສົມບູນ | ໂທ: | 020 99553299 |
| 13 | ພະແນກອຸດສາຫະກຳ ແລະ ການຄ້າ ແຂວງບໍລິຄຳໄຊ | ໂທ:<br>ແຟັກ: | 054 212391<br>054 212123 |
| 14 | ພະແນກອຸດສາຫະກຳ ແລະ ການຄ້າ ແຂວງຄຳມ່ວນ | ໂທ:<br>ແຟັກ: | 051 212075<br>051 212220 |
| 15 | ພະແນກອຸດສາຫະກຳ ແລະ ການຄ້າ ແຂວງສະຫວັນນະເຂດ | ໂທ:<br>ແຟັກ: | 041 212170<br>041 212726 |
| 16 | ພະແນກອຸດສາຫະກຳ ແລະ ການຄ້າ ແຂວງສາລະວັນ | ໂທ:<br>ແຟັກ: | 034 211060<br>034 211440 |
| 17 | ພະແນກອຸດສາຫະກຳ ແລະ ການຄ້າ ແຂວງເຊກອງ | ໂທ/ແຟັກ: | 038 211014 |
| 18 | ພະແນກອຸດສາຫະກຳ ແລະ ການຄ້າ ແຂວງຈຳປາສັກ | ໂທ:<br>ແຟັກ: | 034 211060<br>034 211440 |
| 19 | ພະແນກອຸດສາຫະກຳ ແລະ ການຄ້າ ແຂວງອັດຕະປື | ໂທ:<br>ແຟັກ: | 034 211060<br>034 211440 |
| 20 | ເຂດນິຄົມອຸດສາຫະກຳ ແລະ ການຄ້າວຽງຈັນ - ໂນນທອງ | ໂທ:<br>ແຟັກ: | 021 299012<br>021 299013 |
| 21 | ເຂດເສດຖະກິດພິເສດ ສະຫວັນ - ເຊໂນ | ໂທ : | 020 22223800<br>020 22307898 |

ສະໜັບສະໜູນໂດຍ: ກອງທຶນຊ່ວຍເຫຼືອລ້າຫຼາຍຝ່າຍເພື່ອພັດທະນາການຄ້າ (TDF)


ກະຊວງອຸດສາຫະກຳ ແລະ ການຄ້າ
Ministry of Industry and Commerce-Lao PDR
Trade for Development
www.laosaft.org
TDF ໂຄງການພັດທະນາການຄ້າ ໄລຍະສອງ
Trade Development Facility
TDF - CO-FINANCED BY:
AUSTRALIA, EUROPEAN UNION, GERMANY, IRELAND, USA, WORLD BANK



ກົມການນຳເຂົ້າ ແລະ ສົ່ງອອກ
ກະຊວງອຸດສາຫະກຳ ແລະ ການຄ້າ
ຖະໜົນໂພນໄຊ, ຕູ້ໄປສະນີ 4107, ນະຄອນຫຼວງວຽງຈັນ
ໂທ: +856 21 453 490 ; ແຟັກ: +856 21 454224
ເວັບໄຊ: www.laotradeportal.gov.la
www.laotradeportal.com
www.laotradeportal.org



ສະຫງວນລິຂະສິດ 2015

ຈັດພິມຄັ້ງວັນທີ 30 ມິຖຸນາ 2015